ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
★★★★★★★★★★

ກະຊວງສຶກສາທິການ ແລະ ກິລາ ເລກທີ…3552…/ສສກ.ກນ.13
ນະຄອນຫຼວງວຽງຈັນ, ວັນທີ...28.AUG.2013

## ຂໍ້ຕົກລົງຂອງລັດຖະມົນຕີ
## ວ່າດ້ວຍລະບຽບການຄຸ້ມຄອງ ນັກຮຽນ, ນັກສຶກສາລາວ ໄປສຶກສາຢູ່ຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ (ສະບັບປັບປຸງ) ເລກທີ 04/ສພຊ ລົງວັນທີ 03/07/2007;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶສາທິການ ແລະ ກິລາ ສະບັບ ເລກທີ 282/ນຍ, ລົງວັນທີ 07/09/2011;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມກິດຈະການນັກສຶກສາ ສະບັບເລກທີ 921/ສສກ.ຈຕ ລົງ ວັນທີ 27/03/2012;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມກິດຈະການນັກສຶກສາ;

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຕົກລົງ**
**ລະບຽບຄຸ້ມຄອງ ນັກຮຽນ, ນັກສຶກສາລາວ ໄປສຶກສາຢູ່ຕ່າງປະເທດ ດັ່ງນີ້:**

## <u>ໝວດທີ 1</u>
## ບົດບັນຍັດທົ່ວໄປ

### ມາດຕາ 1: ຈຸດປະສົງ

1. ຂໍ້ຕົກລົງວ່າດ້ວຍລະບຽບການສະບັບນີ້ເປັນນິຕິກຳ ສຳລັບການຄຸ້ມຄອງ ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ນັກຝຶກອົບຮົມໄລຍະຍາວ ທີ່ຖືສັນຊາດລາວໄປສຶກສາຮ່ຳຮຽນ, ຄົ້ນຄວ້າ ຫຼື ຝຶກອົບຮົມ ຢູ່ຕ່າງປະເທດ ໃຫ້ມີການຄຸ້ມຄອງເປັນເອກະພາບ ແລະ ລວມສູນ ໂດຍເລັ່ງໃສ່ການຕິດຕາມຊຸກຍູ້ ໃຫ້ການຊ່ວຍເຫລືອ ແລະ ອຳນວຍຄວາມສະດວກດ້ານຕ່າງໆ ຕາມສະພາບ ແລະ ເງື່ອນໄຂຕົວຈິງ ເພື່ອເຮັດໃຫ້ການກໍ່ສ້າງ ແລະ ການຝຶກອົບຮົມນັກວິຊາການລະດັບຕ່າງໆ ມີຄຸນນະພາບ, ມີປະສິດທິຜົນສູງ ແລະ ນຳເອົາຄວາມຮູ້ຄວາມ

ສາມາດກັບຄືນມາປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງ ປະເທດຊາດໃນແຕ່ລະໄລຍະ.

2. ຂໍ້ຕົກລົງວ່າດ້ວຍລະບຽບການສະບັບນີ້ ກຳນົດນະໂຍບາຍຊຸກຍູ້-ສົ່ງເສີມ ແລະ ລະບຽບວິໄນໃນການເຄື່ອນໄຫວ ສຶກສາຮ່ຳຮຽນ, ຄົ້ນຄວ້າ ແລະ ການດຳລົງຊີວິດຢູ່ຕ່າງປະເທດຂອງນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ແລະ ນັກຝຶກອົບຮົມ ດ້ວຍແຫລ່ງທຶນຕ່າງໆ.

**ມາດຕາ 2: ຂອບເຂດນຳໃຊ້**

ຂໍ້ຕົກລົງວ່າດ້ວຍລະບຽບການສະບັບນີ້ ໃຊ້ສຳລັບ ນັກຮຽນ, ນັກສຶກສາ ນັກຄົ້ນຄວ້າລາວ ທີ່ໄປ ສຶກສາຮ່ຳຮຽນ, ຄົ້ນຄວ້າ ຢູ່ຕ່າງປະເທດ ລະດັບຕ່າງໆ ຄື : ສາມັນສຶກສາ, ອາຊີວະສຶກສາ, ການສຶກສາຊັ້ນສູງທຸກລະດັບ ແລະ ການຝຶກອົບຮົມໄລຍະຍາວ (10 ເດືອນຂຶ້ນໄປ).

**ມາດຕາ 3: ນະໂຍບາຍລວມ**

1. ພັກ ແລະ ລັດຖະບານ ສົ່ງເສີມໃຫ້ພົນລະເມືອງລາວ ຜູ້ທີ່ມີເງື່ອນໄຂດ້ານຄວາມຮູ້ ຄວາມສາມາດ ແລະ ຄວາມພ້ອມດ້ານທຶນຮອນໄດ້ໄປສຶກສາຮ່ຳຮຽນ, ຄົ້ນຄວ້າ ແລະ ຝຶກອົບຮົມເອົາຄວາມຮູ້ດ້ານວັດທະນະທຳ-ສັງຄົມ, ເຕັກນິກວິທະຍາສາດ-ເຕັກໂນໂລຊີ ລະດັບຕ່າງໆ ຢູ່ຕ່າງປະເທດ, ແລ້ວກັບຄືນມາປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.
2. ແຫລ່ງທຶນການສຶກສາຮ່ຳຮຽນຢູ່ຕ່າງປະເທດ ໂດຍທົ່ວໄປມີດັ່ງນີ້:
   (1) ທຶນລັດຖະບານ ທີ່ ໄດ້ມາຈາກງົບປະມານຂອງລັດ ຫລື ການຊ່ວຍເຫລືອລ້າ ຫລື ການກູ້ຢືມຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ.
   (2) ທຶນຊ່ວຍເຫລືອລ້າ ຫລື ແລກປ່ຽນລະຫວ່າງອຳນາດການປົກຄອງທ້ອງຖິ່ນ ຫລື ລະຫວ່າງສະຖາບັນການສຶກສາ.
   (3) ທຶນຊ່ວຍເຫລືອລ້າ ຫລື ກູ້ຢືມຈາກບຸກຄົນ ຫລື ລວມໝູ່ ຫລື ນິຕິບຸກຄົນ.
   (4) ທຶນສ່ວນຕົວ ທີ່ໄດ້ມາຈາກລາຍຮັບຂອງຕົນເອງ ຫລື ໄດ້ຈາກ ພໍ່ແມ່-ຜູ້ປົກຄອງ, ຍາດພີ່ນ້ອງ ຫລື ຜູ້ບໍລິຈາກຕ່າງໆ.

**ມາດຕາ 4: ການຄຸ້ມຄອງ**

ກະຊວງສຶກສາທິການ ແລະ ກິລາ ເປັນສູນກາງການຄຸ້ມຄອງນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ໄປສຶກສາຮ່ຳຮຽນຢູ່ຕ່າງປະເທດຕາມພາລະບົດບາດ ໂດຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ.

# ໝວດທີ 2
# ເງື່ອນໄຂຂອງການໄປສຶກສາຮ່ຳຮຽນຢູ່ຕ່າງປະເທດ

## ມາດຕາ 5: ເງື່ອນໄຂລວມ

ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ທຸກຄົນທີ່ຈະໄປສຶກສາຮ່ຳຮຽນຢູ່ຕ່າງປະເທດ ທຸກລະດັບຕ້ອງມີເງື່ອນໄຂ ລວມດັ່ງນີ້:

1. ມີແຫລ່ງທຶນສະໜັບສະໜູນທີ່ແນ່ນອນ.
2. ຜ່ານການຄົ້ນຄວ້າຄັດເລືອກດ້ວຍວິທີ ແລະ ຮູບການຕ່າງໆ ຕາມເງື່ອນໄຂຂອງແຕ່ລະແຫລ່ງທຶນ.
3. ພາຍຫລັງສຳເລັດການສຶກສາ ຕ້ອງກັບຄືນປະເທດຕາມກຳນົດເວລາ ພ້ອມນຳເອົາເອກະສານຢັ້ງຢືນການສຶກສາຮ່ຳຮຽນ ແລະ ເອກະສານທີ່ກ່ຽວຂ້ອງອື່ນໆໄປສະເໜີຕົວ ຢູ່ກະຊວງສຶກສາທິການ ແລະ ກິລາ ພາຍໃນໄລຍະເວລາ 01 ເດືອນ.

## ມາດຕາ 6: ເງື່ອນໄຂສ່ວນບຸກຄົນ

ກ. ດ້ານອາຍຸ:

1. ລະດັບສາມັນສຶກສາ: ສຳລັບກໍລະນີທົ່ວໄປອະນຸຍາດໃຫ້ໄປຮຽນຕ່າງປະເທດ ເລີ່ມແຕ່ ລະດັບ ມັດທະຍົມສຶກສາຕອນຕົ້ນຂຶ້ນໄປ ມີອາຍຸບໍ່ເກີນ 17 ປີ ກ່ອນມື້ອອກເດີນທາງ ແລະ ຕ້ອງປະຕິບັດຄືບຕາມເງື່ອນໄຂດ້ານກົດໝາຍຂອງປະເທດທີ່ຈະໄປຮຽນນັ້ນ. ກໍລະນີພິເສດ ສະເພາະລູກ-ຫລານ ຂອງ ນັກການທູດ ແລະ ນັກວິຊາການ ຫລື ຜູ້ຊ່ຽວຊານລາວ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ໄປປະຈຳການຢູ່ຕ່າງປະເທດ ຈະໄດ້ຮັບການພິຈາລະນາຕ່າງຫາກ.
2. ລະດັບວິຊາຊີບ ຊັ້ນຕົ້ນ, ຊັ້ນກາງ ແລະ ຊັ້ນສູງ: ກໍລະນີທົ່ວໄປຕ້ອງມີອາຍຸເຕັມ 15 ປີ ຂຶ້ນໄປ ກ່ອນມື້ອອກເດີນທາງໄປຕ່າງປະເທດ.
3. ລະດັບປະລິນຍາຕີ: ກໍລະນີທົ່ວໄປ ຕ້ອງມີອາຍຸ ບໍ່ເກີນ 35 ປີ ກ່ອນມື້ອອກເດີນທາງ ໄປຕ່າງປະເທດ.
4. ລະດັບປະລິນຍາໂທ: ກໍລະນີທົ່ວໄປ ຕ້ອງມີອາຍຸ ບໍ່ເກີນ 40 ປີ ກ່ອນມື້ອອກເດີນທາງໄປຕ່າງປະເທດ.
5. ລະດັບປະລິນຍາເອກ: ກໍລະນີທົ່ວໄປ ຕ້ອງມີອາຍຸ ບໍ່ເກີນ 50 ປີ ກ່ອນມື້ອອກເດີນທາງໄປຕ່າງປະເທດ.
6. ຝຶກອົບຮົມໄລຍະຍາວ: ກໍລະນີທົ່ວໄປ ຕ້ອງມີອາຍຸ ບໍ່ເກີນ 60 ປີ ກ່ອນມື້ອອກເດີນທາງໄປຕ່າງປະເທດ (ຍົກເວັ້ນກໍລະນີພິເສດ ສຳລັບພະນັກງານການນຳຂັ້ນສູງ).

ຂ. ດ້ານສຸຂະພາບ: ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າທຸກລະດັບ ຕ້ອງເປັນຜູ້ທີ່ມີສຸຂະພາບແຂງ

ແຮງ ປົກກະຕິ ທາງ ຮ່າງກາຍ ແລະ ຈິດໃຈ, ບໍ່ມີພະຍາດຕິດແປດ ຫລື ພະຍາດຊ້ຳເຮື້ອຕ່າງໆ.

ຄ. ດ້ານຄຸນສົມບັດ: ຄຸນສົມບັດດີ (ມີການຢັ້ງຢືນຈາກ ໂຮງຮຽນ ຫລື ການຈັດຕັ້ງ ຫລື ຜູ້ປົກຄອງ); ບໍ່ມີຄະດີຕິດຕົວ, ບໍ່ເສບຕິດ ແລະ ອື່ນໆ.

**ມາດຕາ 7: ເງື່ອນໄຂດ້ານຄວາມຮູ້ພື້ນຖານ**

ກໍລະນີທົ່ວໄປ, ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າທຸກຄົນທີ່ຈະໄປສຶກສາຮ່ຳຮຽນຕໍ່ຢູ່ຕ່າງປະເທດ (ຍົກເວັ້ນນັກຝຶກອົບຮົມ ຫລື ນັກຝຶກງານ) ຕ້ອງມີຄວາມຮູ້ພື້ນຖານທາງວັດທະນະທຳ/ວິທະຍາສາດ ຕາມຊັ້ນ ແລະ ລະດັບດັ່ງນີ້:

1. ໄປຮຽນລະດັບມັດທະຍົມສຶກສາ: ມັດທະຍົມສຶກສາຕອນຕົ້ນຕ້ອງມີປະກາສະນີຍະບັດຈົບຊັ້ນປະຖົມສຶກສາ; ມັດທະຍົມສຶກສາຕອນປາຍ ຕ້ອງມີປະກາສະນີຍະບັດຈົບມັດທະຍົມສຶກສາຕອນຕົ້ນ.
2. ໄປຮຽນວິຊາຊີບ: ຊັ້ນຕົ້ນ ຕ້ອງມີປະກາສະນີຍະບັດຈົບມັດທະຍົມສຶກສາຕອນຕົ້ນ ຫລື ທຽບເທົ່າ, ຊັ້ນກາງ ແລະ ຊັ້ນສູງ ຕ້ອງມີປະກາສະນີຍະບັດຈົບມັດທະຍົມສຶກສາຕອນປາຍ ຫລື ທຽບເທົ່າ.
3. ໄປຮຽນລະດັບປະລິນຍາຕີ: ຕ້ອງມີປະກາສະນີຍະບັດຈົບມັດທະຍົມສຶກສາຕອນປາຍ ຫລື ທຽບເທົ່າ.
4. ໄປຮຽນລະດັບປະລິນຍາໂທ: ຕ້ອງມີປະກາສະນີຍະບັດຈົບປະລິນຍາຕີ.
5. ໄປຄົ້ນຄວ້າ ລະດັບປະລິນຍາເອກ: ຕ້ອງມີປະກາສະນີຍະບັດຈົບປະລິນຍາໂທ.
6. ການຝຶກອົບຮົມໄລຍະຍາວ ແລະ ການສຶກສາລະດັບຊ່ຽວຊານ ແມ່ນໃຫ້ປະຕິບັດຕາມເງື່ອນໄຂຂອງ ທຶນ ແລະ ເງື່ອນໄຂຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 8: ເງື່ອນໄຂດ້ານການຄັດເລືອກ**

1. ລະດັບມັດທະຍົມສຶກສາ ໃຫ້ປະຕິບັດຕາມເງື່ອນໄຂຂອງທຶນການສຶກສາ ແລະ ເງື່ອນໄຂຂອງໂຮງຮຽນ ທີ່ຈະໄປຮຽນຢູ່ຕ່າງປະເທດນັ້ນ.
2. ລະດັບວິຊາຊີບ/ວິຊາສະເພາະ ຊັ້ນຕົ້ນ, ຊັ້ນກາງ, ຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ ແລະ ປະລິນຍາເອກ ຫລື ລະດັບຊ່ຽວຊານ ຫລື ຝຶກອົບຮົມໄລຍະຍາວ ຕ້ອງປະຕິບັດຕາມ ວິທີການ ແລະ ເງື່ອນໄຂການຄັດເລືອກຂອງຜູ້ໃຫ້ທຶນ.

**ມາດຕາ 9: ເງື່ອນໄຂດ້ານ ເອກະສານ/ຂໍ້ມູນ**

1. ທືນການສຶກສາ: ທຸກກໍລະນີຕ້ອງມີເອກະສານຢັ້ງຢືນ ແລະ ຂໍ້ມູນລະອຽດກ່ຽວກັບ ທືນການສຶກສາ.
2. ການປະກອບເອກະສານ:
   (1) ຄໍາຮ້ອງສະໝັກດ້ວຍຕົນເອງ ແລະ ຊີວະປະຫວັດຕາມແບບທີ່ຜູ້ໃຫ້ທືນ ແລະ ກະຊວງສຶກສາທິການ ແລະ ກິລາ ກໍານົດ.
   (2) ໜັງສືຢັ້ງຢືນ/ຮັບປະກັນ ຫລື ການເຫັນດີ/ການອະນຸມັດ ຂອງການຈັດຕັ້ງກ່ຽວຂ້ອງ ຫຼື ຜູ້ປົກຄອງ.
   (3) ເອກະສານການຮຽນ: 1). ສໍາເນົາປະກາສະນີຍະບັດ (ເປັນພາສາລາວ ແລະ ແປພາສາອັງກິດ) ແລະ 2). ສໍາເນົາໃບຄະແນນ (ໃນກໍລະນີທີ່ມີຄວາມຕ້ອງການ).
   (4) ໃບຢັ້ງຢືນສຸຂະພາບຈາກໂຮງໝໍຂອງລັດ,ອອກໃຫ້ຢູ່ໃນໄລຍະເວລາທີ່ປະກອບເອກະສານ.
   (5) ສໍາເນົາ ສໍາມະໂນຄົວ ຫລື ບັດປະຈໍາຕົວ ຫລື ໃບຢັ້ງຢືນທີ່ຢູ່.

**ມາດຕາ 10: ການອະນຸມັດ**

1. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທຸກຄົນ ທີ່ຈະອອກເດີນທາງໄປສຶກສາຮໍ່າຮຽນຢູ່ຕ່າງປະເທດ ທຸກລະດັບການສຶກສາ ຕ້ອງໄດ້ຮັບການເຫັນດີ ຫລື ການອະນຸມັດ ຂອງ ພໍ່ແມ່, ຄອບຄົວ ຫລື ຜູ້ປົກຄອງ ຫລື ອົງການຈັດຕັ້ງທີ່ສັງກັດ ເປັນລາຍລັກອັກສອນ;
2. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຕົກລົງອະນຸມັດ.

**ມາດຕາ 11: ການກະກຽມ ໄປຕ່າງປະເທດ**

1. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າທຸກຄົນ ຕ້ອງປະກອບເອກະສານ ຂໍອະນຸມັດໜັງສືຜ່ານແດນ ແລະ ວີຊາ ໃຫ້ສໍາເລັດກ່ອນມື້ອອກເດີນທາງ.
2. ກະຊວງສຶກສາທິການ ແລະ ກິລາ (ກົມກິດຈະການນັກສຶກສາ) ສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງຝຶກອົບຮົມ, ເຜີຍແຜ່, ແນະນໍາ ເອກະສານຂໍ້ມູນຕ່າງໆທີ່ຈໍາເປັນກ່ຽວກັບ ການສຶກສາ ຮໍ່າຮຽນຢູ່ຕ່າງປະເທດ; ຈັດຕັ້ງການຮຽນ ຫຼື ບໍາລຸງພື້ນຖານຄວາມຮູ້ທາງວິທະຍາສາດ ແລະ ພາສາຕ່າງປະເທດ ຕາມສະພາບ ແລະ ເງື່ອນໄຂຕົວຈິງຂອງແຕ່ລະສິກຮຽນ.
3. ກະຊວງສຶກສາທິການ ແລະ ກິລາ (ກົມກິດຈະການນັກສຶກສາ) ເປັນສູນກາງໃນການປະສານງານກະກຽມງົບປະມານ, ພາຫານະ, ການຈັດສົ່ງອອກເດີນທາງ ຫລື ການຕ້ອນຮັບ ຕາມເງື່ອນໄຂຕົວຈິງຂອງແຕ່ລະກໍລະນີ.

## <u>ໝວດທີ 3</u>
## ການຈັດຕັ້ງ ແລະ ການຄຸ້ມຄອງ ນັກຮຽນ, ນັກສຶກສາລາວ ຢູ່ຕ່າງປະເທດ

### ມາດຕາ 12: ການຈັດຕັ້ງ ແລະ ການຄຸ້ມຄອງ ຢູ່ພາຍໃນປະເທດ

1. ກະຊວງສຶກສາທິການ ແລະ ກິລາ (ກົມກິດຈະການນັກສຶກສາ) ຄຸ້ມຄອງໂດຍກົງຕາມພາລະບົດບາດ ແລະ ຂອບເຂດສິດຮັບຜິດຊອບຄື: (1) ຂໍ້ມູນທຶນການສຶກສາ, (2) ການປະສານງານກັບຜູ້ໃຫ້ທຶນ, (3) ຄົ້ນຄວ້າວິທີການ ແລະ ດຳເນີນຂັ້ນຕອນການຄັດເລືອກຮ່ວມກັບພາກສ່ວນກ່ຽວຂ້ອງ, (4) ການຮັບສະໝັກ ແລະ ການປະກອບເອກະສານ, (5) ການກະກຽມ ແລະ ການຈັດສົ່ງອອກເດີນທາງ, (6) ການຮັບຕ້ອນການກັບຄືນປະເທດ ແລະ ຕິດຕາມການປະກອບອາຊີບ.
2. ກະຊວງສຶກສາທິການ ແລະ ກິລາ (ຫ້ອງການກະຊວງ, ກົມພົວພັນຕ່າງປະເທດ ແລະ ກົມກິດຈະການນັກສຶກສາ) ປະສານສົມທົບກັບສະຖານທູດ/ກົງສູນໃຫຍ່ ຫລື ຜູ້ໃຫ້ທຶນການສຶກສາທີ່ ປະຈຳຢູ່ ສ.ປ.ປ ລາວ ແລະ ສະຖານທູດ/ກົງສູນໃຫຍ່ແຫ່ງ ສ.ປ.ປ ລາວ ປະຈຳຢູ່ຕ່າງປະເທດ ເພື່ອຕິດຕາມ ຊຸກຍູ້ ແລະ ແກ້ໄຂບັນຫາຕ່າງໆຂອງນັກຮຽນ-ນັກສຶກສາລາວ.

### ມາດຕາ 13: ການຈັດຕັ້ງ ແລະ ການຄຸ້ມຄອງ ຢູ່ຕ່າງປະເທດ

1. ສະຖານເອກອັກຄະລັດຖະທູດ ແລະ ສະຖານກົງສູນໃຫຍ່ແຫ່ງ ສ.ປ.ປ.ລາວ ທີ່ປະຈຳຢູ່ຕ່າງປະເທດ ມີໜ້າທີ່ຄຸ້ມຄອງໂດຍກົງຮອບດ້ານ ແລະ ປະສານສົມທົບກັບປະເທດເຈົ້າພາບໃນການ ຕິດຕາມຊຸກຍູ້ ແລະ ແກ້ໄຂບັນຫາຕ່າງໆທີ່ພົວພັນເຖິງທຸກການເຄື່ອນໄຫວ ແລະ ການສຶກສາຮ່ຳຮຽນ ຂອງນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ແລະ ລາຍງານໃຫ້ລັດຖະບານ (ກະຊວງ ສຶກສາທິການ ແລະ ກິລາ) ຊາບເປັນປົກກະຕິ.
2. ການຈັດຕັ້ງຂອງນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ:
   (1) ຄະນະຮັບຜິດຊອບ: ນັກຮຽນ-ນັກສຶກສາລາວຢູ່ຕ່າງປະເທດ ທີ່ມີຈຳນວນແຕ່ 05 ຄົນຂຶ້ນໄປ ໃຫ້ມີການແຕ່ງຕັ້ງ ຄະນະຮັບຜິດຊອບນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ຕາມຄວາມຈຳເປັນ ແລະ ເໝາະສົມກັບສະພາບເງື່ອນໄຂຕົວຈິງ ໂດຍແມ່ນເອກອັກຄະລັດຖະທູດ ຫລື ກົງສູນໃຫຍ່ ແຫ່ງ ສ.ປ.ປ.ລາວ ທີ່ປະຈຳຢູ່ປະເທດນັ້ນ ເປັນຜູ້ພິຈາລະນາແຕ່ງຕັ້ງ (ກໍລະນີຈຳນວນຕ່ຳກວ່າ 05 ຄົນ ແມ່ນໃຫ້ຢູ່ໃນຄວາມຮັບຜິດຊອບຂອງສະຖານທູດ ຫລື ກົງສູນໃຫຍ່ໂດຍກົງ). ໃນກໍລະນີຢູ່ປະເທດນັ້ນ ຫາກບໍ່ມີສະຖານທູດ ຫລື ກົງສູນໃຫຍ່, ຄະນະຮັບຜິດຊອບນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ຈະຖືກແຕ່ງຕັ້ງໂດຍກະຊວງສຶກສາ ທິການ ແລະ ກິລາ.

(2) ການຈັດຕັ້ງພັກ ແລະ ການຈັດຕັ້ງມະຫາຊົນ: ສະຖານທູດ ຫລື ກົງສູນໃຫຍ່ມີໜ້າທີ່ ຮັບຜິດຊອບ ແລະ ຄຸ້ມຄອງໂດຍກົງຮອບດ້ານກ່ຽວກັບການເຄື່ອນໄຫວ ຂອງການຈັດຕັ້ງ ພັກ ແລະ ອົງການຈັດຕັ້ງມະຫາຊົນ. ກໍລະນີຢູ່ຕ່າງປະເທດບໍ່ມີສະຖານທູດ ຫລື ກົງສູນ ໃຫຍ່ ແມ່ນກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຕິດຕາມຄຸ້ມຄອງ.

## <u>ໝວດທີ 4</u>
## ຂອບເຂດສິດ, ໜ້າທີ່ ແລະ ຂໍ້ຫ້າມ
## ສໍາລັບ ນັກຮຽນ, ນັກສຶກສາລາວ ຢູ່ຕ່າງປະເທດ

### ມາດຕາ 14: ຂອບເຂດສິດ

1. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທີ່ຮຽນຢູ່ຕ່າງປະເທດດ້ວຍທຶນຕ່າງໆ ໄດ້ຮັບສິດໃນ ການຄຸ້ມຄອງຈາກ ລັດຖະບານຕາມລະບຽບການສະບັບນີ້ ແລະ ຕາມຂໍ້ກຳນົດ ກົດໝາຍທີ່ ກ່ຽວຂ້ອງ ຂອງ ສ.ປ.ປ ລາວ ແລະ ຂອງຕ່າງປະເທດ ທີ່ກຳລັງສຶກສາຮ່ຳຮຽນຢູ່ນັ້ນ.
2. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທີ່ຮຽນຢູ່ຕ່າງປະເທດ ມີສິດໄດ້ຮັບ ແລະ ນຳໃຊ້ທຶນ ການ ສຶກສາ ຕາມການກຳນົດ ແລະ ຕາມການຕົກລົງຂອງຜູ້ໃຫ້ທຶນ.
3. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທີ່ໄດ້ຮັບທຶນການສຶກສາ ຈາກລັດຖະບານໄປຮຽນວິຊາ ຊີບ ຫລື ວິຊາສະເພາະລະດັບຕ່າງໆ ຜົນການສຶກສາຮ່ຳຮຽນຈົບຕາມຫລັກສູດໄດ້ປະເພດເກັ່ງ (ດີເລີດ) ແລະ ມີຄຸນສົມບັດດີ, ມີສິດສະເໜີຂໍທຶນຮຽນຕໍ່ລະດັບສູງຂຶ້ນອີກ 01 ລະດັບ.
4. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ມີສິດເຂົ້າຮ່ວມການເຄື່ອນໄຫວກິດຈະກຳກ່ຽວຂ້ອງ ຕ່າງໆ ທີ່ຈັດຂຶ້ນ ໂດຍສະຖານທູດ ຫລື ກົງສູນໃຫຍ່ ຫລື ປະເທດເຈົ້າພາບ.
5. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ມີສິດໄດ້ຮັບການຍ້ອງຍໍ ຜົນງານການເຄື່ອນໄຫວ ດີເດັ່ນດ້ານຕ່າງໆ ຈາກພັກ ແລະ ລັດຖະບານແຫ່ງ ສ.ປ.ປ ລາວ ແລະ ຈາກສະຖາບັນການ ສຶກສາ ກໍຄືຈາກ ການຈັດຕັ້ງ/ລັດຖະບານ ຂອງຕ່າງປະເທດທີ່ຮຽນຢູ່ນັ້ນ.

### ມາດຕາ 15: ໜ້າທີ່

1. ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທຸກຄົນ, ທຸກລະດັບທີ່ໄປສຶກສາຮ່ຳຮຽນຢູ່ຕ່າງປະເທດ ດ້ວຍທຶນຕ່າງໆ ມີພັນທະ ແລະ ໜ້າທີ່ສຶກສາຮ່ຳຮຽນ, ຄົ້ນຄວ້າ ເອົາຄວາມຮູ້ ດ້ານວິຊາຊີບ/ ວິຊາການ/ວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ສຳເລັດຕາມກຳນົດເວລາ ຂອງຫລັກສູດ ແລະ ກັບຄືນ ປະເທດເພື່ອປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.
2. ປະຕິບັດລະບຽບກົດໝາຍ ແລະ ນັບຖືຮີດຄອງປະເພນີຂອງຊາດລາວ ແລະ ຂອງປະເທດທີ່

ກຳລັງຮຽນຢູ່; ປະຕິບັດລະບຽບວິໄນ ຂອງສະຖາບັນການສຶກສາທີ່ຮຽນຢູ່ຢ່າງເຂັ້ມງວດ; ເຄົາລົບນັບຖືການຈັດຕັ້ງ, ນັບຖືຄູອາຈານ, ຮັກແພງສາມັກຄີກັບເພື່ອນມິດຮ່ວມຊາດ ແລະ ຕ່າງຊາດ.

3. ຕັ້ງໜ້າຝຶກຝົນຫລໍ່ຫລອມຕົນເອງທາງດ້ານ ຄຸນສົມບັດ, ທັດສະນະ, ແນວຄິດການເມືອງ, ຈິດໃຈ ແລະ ຮ່າງກາຍ ໃຫ້ກາຍເປັນພົນລະເມືອງດີຂອງສັງຄົມ ແລະ ຂອງຊາດ.
4. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງການຈັດຕັ້ງ ຂອງລາວ ແລະ ການຈັດຕັ້ງ ຂອງປະເທດ ທີ່ກຳລັງຮຽນຢູ່.
5. ຄະນະຮັບຜິດຊອບນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວ ມີໜ້າທີ່ລາຍງານສະພາບການເຄື່ອນໄຫວ, ການສຶກສາຮ່ຳຮຽນ, ຄົ້ນຄວ້າ ແລະ ການດຳລົງຊີວິດຂອງລວມໝູ່ ຫລື ບຸກຄົນ ໃຫ້ສະຖານທູດ ຫຼື ສະຖານກົງສູນໃຫຍ່ ທີ່ປະຈຳຢູ່ປະເທດນັ້ນ ຫລື ປະເທດໃກ້ຄຽງ. ກໍລະນີຢູ່ ປະເທດນັ້ນ ບໍ່ມີສະຖານທູດ ຫລື ສະຖານກົງສູນໃຫ່ຍ ໃຫ້ລາຍງານໂດຍກົງໄປຍັງກະຊວງສຶກສາທິການ ແລະ ກິລາ ຢູ່ນະຄອນຫຼວງວຽງຈັນ ສ.ປ.ປ.ລາວ.

**ມາດຕາ 16: ຂໍ້ຫ້າມ**

1. ບໍ່ອະນຸຍາດໃຫ້ ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ ທີ່ໄດ້ຮັບທຶນການສຶກສາຂອງລັດຖະບານ ແກ່ຍາວເວລາການສຶກສາ ເກີນການກຳນົດຂອງຫລັກສູດ 01 ສົກຮຽນ ແລະ ບໍ່ອະນຸຍາດໃຫ້ປ່ຽນວິຊາຮຽນໂດຍບໍມີເຫດຜົນທີ່ຈຳເປັນ.
2. ບໍ່ພົວພັນກັບ: ສິ່ງເສບຕິດ, ສິ່ງມຶນເມົາ, ບໍ່ກິນ-ດື່ມ-ຊຸມແຊວເກີນຂອບເຂດ, ບໍ່ຄ້າຂາຍເຖື່ອນ, ບໍ່ສ້າງພັກພວກ-ກຸ່ມກ້ອນ, ການເຄື່ອນໄຫວຕິດຕໍ່ລະບຽບ-ກົດໝາຍ ແລະ ບັນຫາສັງຄົມ ທີ່ຜິດຕໍ່ຮີດຄອງປະເພນີຂອງຊາດລາວ ແລະ ຂອງຕ່າງຊາດ ກໍຄືຂອງປະເທດທີ່ຕົນເອງກຳລັງສຶກສາຮ່ຳຮຽນຢູ່ນັ້ນ.

## <u>ໝວດທີ 5</u>
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17: ນະໂຍບາຍ ຍ້ອງຍໍ ສົ່ງເສີມ**

- ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ, ນັກຝຶກງານ ທີ່ມີຜົນງານການເຄື່ອນໄຫວຂອງບຸກຄົນ ຫລື ລວມໝູ່ ດີເດັ່ນ ຈະຖືກສະເໜີໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ ຂອງ ລາວ ແລະ ປະເທດເຈົ້າພາບໃຫ້ການຍ້ອງຍໍ ຫລື ໃຫ້ລາງວັນປະເພດຕ່າງໆ ຕາມຜົນງານຕົວຈິງ.
- ພິເສດຜູ້ທີຮຽນເກັ່ງໄດ້ປະເພດດີເລີດ ແລະ ມີຄຸນສົມບັດດີ ຈະຖືກພິຈາລະນາໃຫ້ທຶນການສຶກ

ສາຕໍ່ໃນລະດັບສູງຂຶ້ນ.

**ມາດຕາ 18: ມາດຕະການຕໍ່ຜູ້ລະເມີດ**

ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າລາວທຸກຄົນ ທີ່ສຶກສາຮໍ່າຮຽນຢູ່ຕ່າງປະເທດ ມີພຶດຕິກໍາ ຫຼື ການກະທໍາທີ່ລະເມີດຕໍ່ຂໍ້ຕົກລົງວ່າດ້ວຍລະບຽບການສະບັບນີ້ ແລະ ຂໍ້ກໍານົດ ກົດໝາຍ ທີ່ກ່ຽວຂ້ອງທັງຂອງລາວ ແລະ ຕ່າງປະເທດ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ ຫລື ລົງໂທດ ຕາມສະຖານໜັກ ຫລື ເບົາ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 19: ການຈັດຕັ້ງປະຕິບັດ**

- ກະຊວງ, ອົງການການຈັດຕັ້ງທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນ, ສະຖາບັນການສຶກສາ, ອົງການຈັດຕັ້ງຕ່າງໆທັງພາກລັດ ແລະ ເອກະຊົນ, ຄອບຄົວ/ຜູ້ປົກຄອງ, ນັກຮຽນ, ນັກສຶກສາ, ນັກຄົ້ນຄວ້າ, ນັກຝຶກອົບຮົມ ແລະ ທົ່ວສັງຄົມ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.
- ກົມກິດຈະການນັກສຶກສາ, ກະຊວງສຶກສາທິການ ແລະ ກິລາ ເປັນສູນກາງການຄຸ້ມຄອງ ຕິດຕາມ-ກວດກາ, ປະເມີນຜົນການປະຕິບັດ, ການພົວພັນປະສານງານ ກັບ ພາກສ່ວນກ່ຽວຂ້ອງ ແລະ ສະຫລຸບລາຍງານຂັ້ນເທິງໃນແຕ່ລະສົກຮຽນ.

**ມາດຕາ 20: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ສ່ວນຂໍຕົກລົງ ຫລື ຂໍ້ກໍານົດກົດລະບຽບອື່ນໆທີ່ນໍາໃຊ້ໃນເມື່ອກ່ອນ ລ້ວນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ
ກະຊວງສຶກສາທິການ ແລະ ກິລາ

ບ່ອນສົ່ງ:

| | |
|---|---|
| - ຄະນະຈັດຕັ້ງສູນກາງພັກ | 1 ສະບັບ |
| - ຫ້ອງວ່າການລັດຖະບານ | 1 ສະບັບ |
| - ກະຊວງແລະອົງການທຽບເທົ່າ ບ່ອນລະ | 1 ສະບັບ |
| - ສະຖານທູດ/ກົງສູນ ລາວຢູ່ຕ່າງປະທດ ບ່ອນລະ | 1 ສະບັບ |
| - ຫ້ອງວ່າການປົກຄອງແຂວງ/ນະຄອນ ບ່ອນລະ | 1 ສະບັບ |

- ກົມ, ສະຖາບັນ ແລະສູນພາຍໃນກະຊວງບ່ອນລະ 1 ສະບັບ
- ພະແນກ ສສກ, ແຂວງ/ນະຄອນ ບ່ອນລະ 1 ສະບັບ
- ມະຫາວິທະຍາໄລແຫ່ງຕ່າງໆ ບ່ອນລະ 1 ສະບັບ
- ໂຮງຮຽນ, ວິທະຍາໄລ ທີ່ກ່ຽວຂ້ອງ ບ່ອນລະ 1 ສະບັບ
- ເກັບມ້ຽນ 3 ສະບັບ